ຂັ້ນຕອນການການລ້ຽງໝູຂຸມ

24

1 ຫຍ້າໝັກແມ່ນຫຍັງ?

- ໃຫ້ຄັດເລືອກບ່ອນປຸກສ້າງຄອກໝູໃນສະຖານທີ່ໂນນ, ບໍ່ມີນ້ຳຖ້ວມເວລາຝົນຕົກ ຫຼື ສາມາດລະບາຍນ້ຳໄດ້ດີ.
- ຄວນມີຕົ້ນໄມ້ເພື່ອເປັນຮົ່ມເງົາບັງແສງແດດ, ລົມຝົນ, ພະຍຸ, ແຕ່ຕ້ອງຮັບປະກັນໃຫ້ ມີລົມລ່ວງດີ.
- ການສ້າງຄອກຄວນໃຫ້ເໝາະສົມກັບຈຳນວນ ແລະຂະໜາດໝູທີ່ຈະລ້ຽງ ເພື່ອນຳໃຊ້ຄອກໃຫ້ຄຸ້ມຄ່າ ການລົງທຶນ.

2 ການສ້າງຄອກ

2.1. ໂຄງສ້າງເຮືອນຄອກ:

- ຮູບແບບຄອກ: ເພີງໝາແຫງນ, ເພີງໝາແຫງນກາຍ, ແບບໜ້າຈົ່ວຊັ້ນດຽວ, ແບບໜ້າຈົ່ວສອງຊັ້ນ
- ທິດທາງຂອງຄອກ ສະຫຼຽງເລັກນ້ອຍຕາມທິດຕາເວັນອອກ-ຕາເວັນຕົກ ເພື່ອໃຫ້ແສງແດດສ່ອງເຂົ້າ ບໍລິເວນຄອກໄດ້ດີ
- ໂຄງສ້າງຂອງຄອກຕ້ອງແຂງແກ່ນ, ທົນທານ, ອີງໃສ່ວັດຖຸທີ່ຫາໄດ້ງ່າຍ ຫຼັງຄາມຸງດ້ວຍຫຍ້າ, ສັງກະສີ, ຮັບປະກັນບໍ່ໃຫ້ຝົນຮົ່ວ
- ບໍລິເວນຕັ້ງຄອກຕ້ອງເປັນບ່ອນໂນນ ຕາມຊາຍຄາຄອກຄວນເຮັດຮ່ອງເພື່ອລະບາຍນ້ຳໄດ້ໄວ
- ຂຸດຂຸມເລິກປະມານ 70-90 ຊັງຕີແມັດ ໃສ່ພື້ນດິນບ່ອນເຮົາຈະລ້ຽງໝູ ແລ້ວນຳເອົາວັດສະດຸທີ່ຍ່ອຍສະລາຍໄດ້ເຊັ່ນ: ຂີ້ແກບ, ຂີ້ເລື່ອຍ, ໃສ່ລົງໄປແທນດິນທີ່ຂຸດອອກໃຫ້ເຕັມ.
- ກໍ່ດິນປ້ອກອ້ອມຂ້າງຂຸມສູງປະມານ 40-50 ຊັງຕີແມັດ ຫຼື ອາດໃຊ້ໄມ້ປ່ອງ ຫຼື ໄມ້ຈີງກໍໄດ້ເພື່ອລິດຕົ້ນທຶນ ໂດຍເນັ້ນວັດຖຸທີ່ຫາໄດ້ງ່າຍໃນທ້ອງຖິ່ນ ແລະ ບໍ່ມີລາຄາແພງ, ຝາຕ້ອງແໜ້ນ ມີຄວາມທົນທານໃຊ້ງານໄດ້ຫຼາຍປີ, ຮັບປະກັນບໍ່ໃຫ້ນ້ຳຝົນໄຫຼເຂົ້າໃນຄອກ.
- ຂະໜາດຄວາມກວ້າງຂອງຄອກຂຶ້ນກັບຈຳນວນໝູທີ່ຈະລ້ຽງຄື 1 ໂຕຕໍ່ພື້ນທີ່ 1,2-1,5 ມ2 ສົມມຸດລ້ຽງ 10ໂຕ ຈະໃຊ້ພື້ນທີ່ປະມານ 2-15ມ2.

ລັກສະນະຂອງຄອກໝູ

ດ້ານຂ້າງຂອງຄອກໝູ

2.2. ການຂຸດຂຸມຄອກ ແລະ ກະກຽມພື້ນຄອກ :

- ວັດແທກຄວາມຍາວ ຊຶ່ງເປັນທິດທາງດຽວກັບຝາຄອກ ແທກເຂົ້າໄປດ້ານໃນທັງ 4 ດ້ານໆລະ 30-40 ຊັງຕີແມັດ ແລ້ວຂຸດດິນໃຫ້ເລິກປະມານ 70-90 ຊັງຕີແມັດ ຫຼື ຕື້ນກວ່ານີ້ກໍໄດ້.
- ແບ່ງເຄິ່ງຂອບຂຸມທີ່ເຫຼືອທັງສີ່ດ້ານ ແລະ ຂຸດໃຫ້ເລິກລົງໄປ 30 ຊັງຕີແມັດ ຂຸດເປັນຮູບຄ້າຍໂຕແອວ (L).
- ໃຊ້ດິນປ້ອກກໍ່ໃສ່ເທິງໂຕ (L) ທັງສີ່ດ້ານ ຫຼື ອາດຈະໃຊ້ໄມ້ແບບຕີແບບ ແລະ ເທຊີມັງກໍໄດ້ ເພື່ອເຮັດເປັນເລັບຄອນກີດລົງໄປຕາມຂອບໜຸ່ມ ເພື່ອປ້ອງກັນບໍ່ໃຫ້ໝູໃຊ້ປາກດຸດຂອບໜຸ່ມເພເສຍຫາຍ.
- ຂີ້ແກບ, ຂີ້ເລື່ອຍ, ໃບໄມ້ແຫ້ງ,ຫຍ້າແຫ້ງ, ເຟືອງຕັດເປັນທ່ອນ,ຕົ້ນສາລີແຫ້ງ(ຫຼັງເກັບກ່ຽວ) ຫຼື ເສດເຫຼືອອື່ນໆທີ່ສາມາດຍ່ອຍສະລາຍໄດ້ງ່າຍ.
- ດິນ ທີ່ຂຸດອອກຈາກຂຸມ ຫຼືດິນແດງ.
- ຖ່ານໄມ້, ເກືອ, ຂີ້ສັດ.
- ນ້ຳໝັກທີ່ກຽມໄວ້.
- ເຊື້ອລາຂາວທີ່ໄດ້ຈາກທຳມະຊາດທີ່ຢູ່ຕາມໃຕ້ຕົ້ນໄມ້ໃຜ່ຊະນິດຕ່າງໆ.
- ນ້ຳໝັກຈຸລິນຊີຈາກທຳມະຊາດທັງຈາກພືດ ແລະ ສັດ.

ລັກສະນະຂອງການຂຸດຂຸມ

ລັກສະນະເຮັດເປັນເລັບຄອນກີດ

ຂັ້ນຕອນການເຮັດ:

- ກຽມຂຸມໃຫ້ໄດ້ຕາມຂະໜາດ ແລະ ພຽງພໍກັບໝູທີ່ຈະລ້ຽງ .
- ຊັ້ນທີ 1: (ຊັ້ນລຸ່ມສຸດ)ໃສ່ແກບ, ຂີ້ເລື່ອຍ ຫຼື ວັດສະດຸອື່ນທີ່ຍ່ອຍສະລາຍໄດ້ ທີ່ໄດ້ກຽມໄວ້ ເທລົງໃຫ້ສູງປະມານ 35 ຊັງຕີແມັດ ຫຼື ເຄິ່ງໜຶ່ງຂອງຂຸມ ຖ້າຂະໜາດຂຸມກວ້າງ 3 ແມັດ ຍາວ 3 ແມັດ ເລິກ 70 ຊັງຕີແມັດຈະຕ້ອງໃສ່ແກບ ຂີ້ເລື່ອຍປະມານ 400 ກິໂລ.
- ຊັ້ນທີ 2: ໃສ່ດິນແດງ ຫຼື ດິນທີ່ຂຸດອອກນັ້ນລົງໄປປະມານ 10%ຂອງຊັ້ນທີ 1 ຄືປະມານ 40 ກິໂລ.
- ຊັ້ນທີ 3: ໃສ່ຖ່ານໄມ້ 10% ຂອງຊັ້ນທີ 1 ຫຼື ປະມານ 40ກິໂລ, ຖ່ານຄວນທຸບໃຫ້ມີຂະໜາດນ້ອຍທີ່ສຸດ(ທັບໃຫ້ມຸ່ນ).
- ຊັ້ນທີ 4: ໃສ່ເກືອ ໂດຍໃສ່ 1% ຂອງຊັ້ນທີ 1 ປະມານ 4 ກິໂລ ໃຫ້ທົ່ວ.
- ຊັ້ນທີ 5: ໃສ່ຂີ້ສັດແຫ້ງ(ຂີ້ງົວ,ຄວາຍ,ແບ້,ໝູ,ສັດປີກ)ໃສ່ 10%ຂອງຊັ້ນທີ 1 ຫຼື ປະມານ 40 ກິໂລ.
- ຊັ້ນທີ 6: ໃສ່ແກບ ຫຼື ຂີ້ເລື່ອຍລົງໄປໃຫ້ເຕັມຂຸມໃຫ້ພຽງ ຫຼື ໂນນເລັກນ້ອຍ.
- ເມື່ອໃສ່ວັດສະດຸຄົບທຸກຊັ້ນແລ້ວ ໃຫ້ຫົດນ້ຳໝັກຈຸລິນຊີຈາກທຳມະຊາດ ແລະເຊື້ອລາຂາວໃນອັດຕາສ່ວນ 2 ບ່ວງແກງຕໍ່ນ້ຳ 10 ລິດ.
- ປະໄວ້ 4 ມື້ ແລ້ວຈຶ່ງເອົາໝູເຂົ້າລ້ຽງໄດ້.
- ເມື່ອເອົາໝູເຂົ້າລ້ຽງແລ້ວໃຫ້ໃຊ້ນ້ຳໃນສູດປະສົມຂ້າງເທິງຫົດຕາມຕີນໂຕຂອງໝູລົງຂະລ້າງລົງພື້ນອາທິດລະ 1-2 ຄັ້ງ.
- ປະສົມນ້ຳໝັກຈຸລິນຊີໃນນ້ຳດື່ມ ໃຫ້ໝູໄດ້ກິນໃນອັດຕາສ່ວນທີ່ໄດ້ບິ່ງໄວ້ໃນແຕ່ລະຊະນິດ.
- ພາຍໃນຄອກໝູບໍ່ຄວນໃຫ້ອົບເອົ້າ ໃຫ້ມີອາກາດລ່ວງໄດ້ດີ .

ລັກສະນະຂອງການຂຸດຂຸມ

ລັກສະນະເຮັດເປັນເລັບຄອນກີດ

3 ແນວພັນໝູ

ແນວພັນໝູລາດ: ຕີນໂຕສີດຳ, ໜ້າຜາກມີສີຂາວ ແລະ ມີນ້ຳໜັກ ລະຫວ່າງ 80 ຫາ 100 ກິໂລ.

ແນວພັນໝູມີ້ງ: ມີສີດຳ ແລະ ຮູບຮ່າງໃຫຍ່ທີ່ມີນ້ຳຫນັກເຕັມທີ່ປະມານ 80 ຫາ 120 ກິໂລ.

ແນວພັນໝູຈີດ: ມີສີດຳ, ຮູບຮ່າງນ້ອຍ ມີນ້ຳຫນັກປະມານ 40-60 ກິໂລ.

ແນວພັນໝູມແດງ: ມີສີແດງ, ຫນ້າພາກສັ້ນ, ຮູບຮ່າງໃຫຍ່ ແລະ ມີນ້ຳຫນັກປະມານ 65-90 ກິໂລ.

4 ການນຳໃຊ້ໃຫ້ສັດກິນ

- ຊັ້ນທີ 6: ໃສ່ແກບ ຫຼື ຂີ້ເລື່ອຍລົງໄປໃຫ້ເຕັມຂຸມໃຫ້ພຽງ ຫຼື ໂນນເລັກນ້ອຍ.
- ເມື່ອໃສ່ວັດສະດຸຄົບທຸກຊັ້ນແລ້ວ ໃຫ້ຫົດນ້ຳໝັກຈຸລິນຊີຈາກທຳມະຊາດ ແລະເຊື້ອລາຂາວໃນອັດຕາສ່ວນ 2 ບ່ວງແກງຕໍ່ນ້ຳ 10 ລິດ.
- ປະໄວ້ 4 ມື້ ແລ້ວຈຶ່ງເອົາໝູເຂົ້າລ້ຽງໄດ້.
- ເມື່ອເອົາໝູເຂົ້າລ້ຽງແລ້ວໃຫ້ໃຊ້ນ້ຳໃນສູດປະສົມຂ້າງເທິງຫົດຕາມຕີນໂຕຂອງໝູລົງຂະລ້າງລົງພື້ນອາທິດລະ 1-2 ຄັ້ງ.
- ປະສົມນ້ຳໝັກຈຸລິນຊີໃນນ້ຳດື່ມ ໃຫ້ໝູໄດ້ກິນໃນອັດຕາສ່ວນທີ່ໄດ້ບິ່ງໄວ້ໃນແຕ່ລະຊະນິດ.
- ພາຍໃນຄອກໝູບໍ່ຄວນໃຫ້ອົບເອົ້າ ໃຫ້ມີອາກາດລ່ວງໄດ້ດີ .

ການໝັກເຟືອງໃສ່ອ່າງຊີມັງ

ການໝັກເຟືອງໃສ່ຖັງ ຫລື ຟຸຍ

4 ການນຳໃຊ້ໃຫ້ສັດກິນ

ເພື່ອປ້ອງກັນບໍ່ໃຫ້ສັດທີ່ກິນເຟືອງໝັກຈົນກາຍເປັນໄດ້ຮັບທາດເບື່ອອັນເນື່ອງມາຈາກຢູເຣຍຄວນມີຂໍ້ລະວັງດັ່ງລຸ່ມນີ້:

- ການໝັກເຟືອງຈະຕ້ອງໃຊ້ເວລາຫຼັງຈາກໝັກໄດ້ 2 ຫາ 3 ອາທິດ. ແລ້ວຈຶ່ງສາມາດນຳໄປໃຫ້ສັດກິນໄດ້.
- ສຳລັບສັດທີ່ຝຶກກິນຄວນຕາກເຟືອງໝັກດ້ວຍລົມໃຫ້ແຫ້ງກ່ອນຈະນຳໄປໃຫ້ສັດກິນ.
- ບໍ່ຄວນໃຊ້ເຟືອງໝັກລ້ຽງໝູ, ມ້າ ແລະ ງົວ-ຄວາຍນ້ອຍທີ່ຍັງບໍ່ເຄີຍກິນຫຍ້າ.
- ຄວນຝຶກໃຫ້ສັດລຶ້ງກັບການກິນເຟືອງໝັກກ່ອນໂດຍປົນກັບເຟືອງລ້າໃຫ້ກິນກ່ອນແລ້ວຄ່ອຍເພີ່ມເຟືອງໝັກຂຶ້ນເທື່ອລະໜ້ອຍປະມານ 10 ວັນຈຶ່ງໃຫ້ສັດກິນແຕ່ເຟືອງໝັກໄດ້.
- ເມື່ອສັດໄດ້ກິນເຟືອງໝັກຈະເຮັດໃຫ້ສັດບໍ່ຈ່ອຍ,ມີສະພາບທາງຮ່າງກາຍແຂງແຮງສົມບຸນດີ, ສາມາດເຮັດວຽກໜັກໄດ້ແລະທົນທານ.
- ຂີ້ສັດທີ່ກິນເຟືອງໝັກ ຈະເປັນຝຸ່ນທີ່ມີຄຸນນະພາບດີກວ່າຂີ້ສັດທຳມະດາ.

NAFRI

DTFAP

IFAD
Investing in rural people

ໂຄງການກະສິກຳ ເພື່ອໂພຊະນາການ

ບ້ານໂພນໄຊ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສ ປປ ລາວ.
Phonexay village, Saysettha district, Vientiane Capital, Lao PDR.
ໂທ: +856 20 416 556
Fax: +856 20 416 556
E-mail : ssfsn.project@gmail.com
ເວັບໄຊ: www.afn.gov.la